# ທ່ານ ຜູ້ອຳນວຍການ ທຄຕລ ໄດ້ຮັບໂລ້ລາງວັນອັນຊົງກຽດຈາກອົງກອນ Women's Tabloid




ໃນວັນທີ 22 ມັງກອນ 2026 ທ່ານ ນ. ສາຍສະໝອນ ຈັນທະຈັກ ຜູ້ອຳນວຍການ ທຄຕລ ໄດ້ຮັບກຽດເຂົ້າຮ່ວມ ຮັບລາງວັນ ຜູ້ບໍລິຫານຍິງດີເດັ່ນ-ສາຂາທະນາຄານ ປະຈຳປີ 2025 ຈາກອົງກອນ Women's Tabloid, ເຊິ່ງ ງານດັ່ງກ່າວຈັດທີ່ ນະຄອນ Dubai, ປະເທດ United Arab Emirates 🇦🇪

ອົງກອນ Women's Tabloid ( WT) ເປັນອົງກອນສາກົນ ຈາກປະເທດ ສະຫະລາຊະອານາຈັກອັງກິດ ໄດ້ ມອບລາງວັນແກ່ພາກສ່ວນທຸລະກິດທີ່ມີຜູ້ບໍລິຫານເປັນເພດຍິງ, ສຳລັບປີ 2025 ໄດ້ມີຫົວໜ່ວຍທຸລະກິດ ທີ່ຜ່ານ ການຄັດເລືອກ ແລະ ເຂົ້າຮ່ວມຮັບລາງວັນຈຳນວນ 201 ບໍລິສັດ ຈາກ 51 ປະເທດທົ່ວໂລກ. ໃນນັ້ນ ທ່ານ ນ. ສາຍສະໝອນ ຈັນທະຈັກ ໄດ້ຮັບກຽດເຂົ້າຮ່ວມຮັບລາງວັນອັນຊົງກຽດ ຜູ້ບໍລິຫານຍິງດີເດັ່ນ - ສາຂາທະນາຄານ ປະຈຳປີ 2025 ເຊິ່ງວ່າເປັນຜູ້ບໍລິຫານຍິງໃນຂົງເຂດທະນາຄານທຸລະກິດໃນ ສປປ ລາວ ທີ່ໄດ້ຮັບລາງວັນດັ່ງກ່າວ.

ລາງວັນຜູ້ບໍລິຫານຍິງດີເດັ່ນ ສາຂາທະນາຄານ ທີ່ຜູ້ອຳນວຍການ ທຄຕລ ໄດ້ຮັບຖືເປັນບາດກ້າວສຳຄັນ ໃນການ ຢັ້ງຢືນຜົນສຳເລັດການຊີ້ນຳ-ນຳພາ ການບໍລິຫານ ທຄຕລ ໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ທັງພາຍໃນປະເທດ ພາກພື້ນ ກໍ່ຄືໃນເວທີສາກົນ. ທຄຕລ ໄດ້ຮັບການຍອມຮັບຈາກສາກົນວ່າເປັນທະນາຄານທຸລະກິດທີ່ໂດດເດັ່ນໃນ ການຂະຫຍາຍຕົວ ແລະ ເປັນຜູ້ນຳດ້ານທະນາຄານດິຈິຕອນທີ່ທັນສະໄໝ ເຊື່ອມໂຍງຕະຫຼາດເງິນ ໃນພາກພື້ນ ແລະ ສາກົນ.